ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 09 ຫາ 13 ຕຸລາ 2023




ພິທີສະເຫຼີມສະຫຼອງວັນອາຫານໂລກ, ວັນສາກົນ ແລະ ສັບປະດາແຫ່ງຊາດ
ເພື່ອລຶບລ້າງຄວາມທຸກຍາກ ປະຈຳປີ 2023

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ພິທີສະເຫຼີມສະຫຼອງວັນອາຫານໂລກ, ວັນສາກົນ ແລະ ສັບປະດາແຫ່ງຊາດ ເພື່ອລຶບລ້າງຄວາມທຸກຍາກ ປະຈຳປີ 2023

ວັນທີ 9 ຕຸລາ 2023 ນີ້ທີ່ສະຖາບັນຄົ້ນຄວ້າ ກະສິກຳ ປ່າໄມ້ ແລະ ພັດທະນາຊົນນະບົດ, ກະຊວງກະສິກຳ ແລະ ປ່າໄມ້ ຮ່ວມກັບ ອົງການອາຫານ ແລະ ການກະເສດ ແລະ ອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ຈັດງານສະເຫຼີມສະຫຼອງວັນອາຫານໂລກ ຄົບຮອບ 43 ປີ ພາຍໃຕ້ຄຳຂວັນ ທີ່ວ່າ" ນ້ຳ ປຽບເໝືອນດັ່ງຊີວິດ "ນ້ຳຄືແຫຼ່ງກຳເນີດອາຫານຂອງພວກເຮົາ, ພວກເຮົາພ້ອມກັນກ້າວໄປ" ແລະ ລະນຶກເຖິງ ວັນສາກົນ ແລະ ສັບປະດາແຫ່ງຊາດ ເພື່ອລຶບລ້າງຄວາມທຸກຍາກ ຄົບຮອບ 31 ປີພາຍໃຕ້ຄຳ ຂວັນທີ່ວ່າ "ພ້ອມກັນຈັດຕັ້ງປະຕິບັດ ໃຫ້ປະກົດຜົນເປັນຈິງ ເພື່ອກຽດສັກສີຂອງ ທຸກຄົນ". ໂດຍການໃຫ້ກຽດເຂົ້າຮ່ວມ ຂອງທ່ານ ປອ. ເພັດ ພົມພິພັກ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ທ່ານ ນາງ ຮັ່ງ ທິ ທັນ ພານ ຮັກສາການ ຜູ້ຕາງໜ້າອົງການອາຫານ ແລະ ການກະເສດ ປະຈຳ ສປປ ລາວ, ທ່ານ ນາງ ມາຕິນ ເທເຣີ, ຜູ້ຕາງໜ້າ ອົງການສະຫະປະຊາຊາດເພື່ອການພັດທະນາ ປະຈຳ ສປປ ລາວ. ມີບັນດາທ່ານ ການນຳຈາກ ກະຊວງ, ອົງການທຽບເທົ່າ ຂັ້ນສູນກາງ ແລະ ທ້ອງຖິ່ນ, ບັນດາທ່ານ ເອກອັກຄະລັດຖະທູດ, ທູຕານຸທູດ ແລະ ຄູ່ຮ່ວມພັດທະນາ ພ້ອມດ້ວຍແຂກທີ່ຖືກເຊີນ ເຂົ້າຮ່ວມ ຢ່າງເປັນຂະບວນຟົດຟື້ນ.

ທ່ານ ປອ. ເພັດ ພົມພິພັກ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ກ່າວມີຄຳເຫັນຕໍ່ພິທີວ່າ: ການໂຮມຊຸມນຸມໃນມື້ນີ້ ມີຄວາມໝາຍສຳຄັນຫຼາຍ ເພື່ອແນໃສ່ ປູກຈິດສຳນຶກ ແລະ ສ້າງຄວາມຮັບຮູ້ໃຫ້ປະຊາຊົນໃນທົ່ວໂລກເວົ້າລວມເວົ້າສະເພາະ ກໍ່ຄື ສປປ ລາວ ໄດ້ເຂົ້າໃຈເຖິງ ຄວາມທຸກຍາກ ແລະ ໄພອຶດຫິວ ເພື່ອໃຫ້ເຂົາເຈົ້າຮູ້ສຶກວ່າ ຕົນເອງມີກຽດສັກສີ, ມີເຫື່ອແຮງ ສະຕິປັນຍາຄືຄົນທົ່ວໄປ, ມີຄວາມກ້າຫານ ແລະ ມີຄວາມ




ສາມາດ ປົນຕົວອອກຈາກຄວາມທຸກຍາກ ແລະ ໄພອຶດຫິວໄດ້. ພ້ອມນັ້ນ ກໍ່ຖືໂອກາດນີ້ ເປັນການສ້າງຄວາມຮັບຮູ້ ແລະ ຮຽກຮ້ອງໃຫ້ທຸກພາກສ່ວນມີສ່ວນຮ່ວມ ໃນການຜະລິດສະບຽງອາຫານ ໃຫ້ມີຄຸນນະພາບ, ພຽງພໍໂດຍຖືວ່າ ນໍ້າ ເປັນປັດໃຈສໍາຄັນ ຕົ້ນຕໍ ໃນການຜະລິດກະສິກໍາ. ເພາະສະນັ້ນ, ພວກເຮົາຕ້ອງຮ່ວມແຮງ ຮ່ວມໃຈກັນ ນໍາໃຊ້ນໍ້າ ຢ່າງປະຢັດ, ເກີດປະໂຫຍດສູງສຸດ ແລະ ໃຫ້ມີຄວາມຍືນຍົງ. ໃນຕອນທ້າຍພິທີສະເຫຼີມສະຫຼອງດັ່ງກ່າວ, ທ່ານ ລັດຖະມົນຕີ ກະຊວງກະສິກໍາ ແລະ ປ່າໄມ້ ພ້ອມດ້ວຍຄະນະ ແລະ ແຂກທີ່ຖືກເຊີນ ໄດ້ຮ່ວມກັນ ຕັດແຖບຜ້າ ແລະ ໄດ້ ລັ່ນຄ້ອງເກົ້າບາດ ເພື່ອເປີດພິທີຢ່າງເປັນທາງການ ພ້ອມທັງ ມີການບໍລິຈາກເພື່ອສົມທົບທຶນເຂົ້າໃນການຄໍ້າປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານໂພຊະນາການ ແລະ ແກ້ໄຂຄວາມທຸກຍາກ Tele food ໂດຍທຶນດັ່ງກ່າວຈະໃຊ້ເຂົ້າໃນການຈັດຫາແນວພັນພືດ ແລະ ສັດ ເພື່ອຊ່ວຍເຫຼືອປະຊາຊົນທີ່ຖືກຜົນກະທົບຈາກໄພພິບັດ, ການລະບາດຂອງສັດຕູພືດ, ພະຍາດສັດ ແລະ ອື່ນໆ, ສໍາລັບໃນປີ 2023 ງານສະເຫຼີມສະຫຼອງແມ່ນໄດ້ຈັດຂຶ້ນ ເປັນເວລາ 05 ວັນ ລະຫວ່າງວັນທີ 9-13 ຕຸລາ 2023 ໂດຍມີຮ້ານວາງສະແດງ ແລະ ຈໍາໜ່າຍ ຜົນຜະລິດ, ຜະລິດຕະພັນກະສິກໍາ ຫຼາຍກວ່າ 100 ບຸດ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄໍາແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອໍານອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກໍາ;ແລະ ປ່າໄມ້;